ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09 ພະຈິກ 2016

# ກົດໝາຍ

# ວ່າດ້ວຍ ທະນາຍຄວາມ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງທະນາຍຄວາມ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນທຳ ແລະ ມີປະສິດທິຜົນ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ ທັງຮັບປະກັນຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ, ສະໜອງຫຼັກຖານໃຫ້ແກ່ການແກ້ໄຂຄະດີ ແລະ ສ້າງຄວາມເຂັ້ມແຂງແກ່ຂະບວນການຍຸຕິທຳ, ສ້າງເງື່ອນໄຂໃນການເຂົ້າເຖິງຂະບວນການຍຸຕິທຳ, ສ້າງຄວາມເຊື່ອໝັ້ນແກ່ປະຊາຊົນ ແລະ ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

**ມາດຕາ 2 (ປັບປຸງ) ທະນາຍຄວາມ**

ທະນາຍຄວາມ ແມ່ນ ບຸກຄົນທີ່ໄດ້ຮັບອະນຸຍາດຈາກລັດ ໃຫ້ເຄື່ອນໄຫວວິຊາຊີບ ໃນການໃຫ້ບໍລິການທາງດ້ານກົດໝາຍແກ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ ທັງຮັບປະກັນຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຈັນຍາບັນທະນາຍຄວາມ** ໝາຍເຖິງ ກົດລະບຽບພາຍໃນຂອງສະພາທະນາຍຄວາມ ກ່ຽວກັບຄຸນສົມບັດ, ຫຼັກການປະພຶດ ແລະ ການເຄື່ອນໄຫວວິຊາຊີບຂອງທະນາຍຄວາມ;

2. **ລູກຄວາມ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສັນຍາບໍລິການທາງດ້ານກົດໝາຍ ກັບ ທະນາຍຄວາມ;

3. **ສັນຍາບໍລິການທາງດ້ານກົດໝາຍ** ໝາຍເຖິງ ການຕົກລົງເປັນລາຍລັກອັກສອນ ລະຫວ່າງລູກຄວາມກັບທະນາຍຄວາມ ເພື່ອໃຫ້ການບໍລິການທາງດ້ານກົດໝາຍ;

4. **ການໃຫ້ການບໍລິການທາງດ້ານກົດໝາຍ** ໝາຍເຖິງ ການເຄື່ອນໄຫວຂອງທະນາຍຄວາມໃນການໃຫ້ຄໍາປຶກສາດ້ານກົດໝາຍ ແລະ ການຕາງໜ້າລູກຄວາມໃນການດໍາເນີນຄະດີ;

5. **ການຕາງໜ້າລູກຄວາມໃນການດໍາເນີນຄະດີ** ໝາຍເຖິງ ການເປັນຕົວແທນໃນການຕໍ່ສູ້ຄະດີ ຫຼື ການວ່າຄວາມ;

6. **ວິສາຫະກິດກົດໝາຍ** ໝາຍເຖິງ ການຈັດຕັ້ງດໍາເນີນການໃຫ້ບໍລິການທາງດ້ານກົດໝາຍຂອງບຸກຄົນ ຫຼື ນິຕິບຸກຄົນ ເປັນຕົ້ນ ບໍລິສັດທີ່ປຶກສາກົດໝາຍ;

7. **ຄະນະວິໄນທອນ** ໝາຍເຖິງ ຄະນະຄົ້ນຄວ້າ ແລະ ສະເໜີ ລົງວິໄນທະນາຍຄວາມທີ່ລະເມີດກົດລະບຽບພາຍໃນຂອງສະພາທະນາຍຄວາມ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບທະນາຍຄວາມ**

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ມີທະນາຍຄວາມ ແລະ ວິສາຫະກິດກົດໝາຍ ທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະໜອງການບໍລິການທາງດ້ານກົດໝາຍ ໃຫ້ແກ່ສັງຄົມຢ່າງທົ່ວເຖິງ.

ລັດ ຊຸກຍູ້ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ທະນາຍຄວາມ ໃນການບໍລິການທາງດ້ານກົດໝາຍ ແລະ ການແຂ່ງຂັນກັນພັດທະນາຕົນເອງ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລູກຄວາມ ແລະ ສາມາດເຄື່ອນໄຫວໄດ້ຢ່າງເຕັມສ່ວນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານທະນາຍຄວາມ**

ວຽກງານທະນາຍຄວາມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ລະບຽບການ ແລະ ຈັນຍາບັນທະນາຍຄວາມ;

2. ມີຄວາມຮັບຜິດຊອບສູງ ແລະ ຄວາມເປັນທໍາໃນການໃຫ້ບໍລິການທາງດ້ານກົດໝາຍ;

3. ມີຄວາມເປັນເອກະລາດ ໃນການໃຫ້ການບໍລິການທາງດ້ານກົດໝາຍ;

4. ຮັກສາຄວາມລັບຂອງລູກຄວາມ;

5. ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບການກະທຳທີ່ບໍ່ຖືກຕ້ອງຂອງຕົນໃນການໃຫ້ການບໍລິການທາງດ້ານກົດໝາຍ.

**ມາດຕາ 6 ການປົກປ້ອງທະນາຍຄວາມ**

ໃນການໃຫ້ການບໍລິການທາງດ້ານກົດໝາຍແກ່ລູກຄວາມນັ້ນ ທະນາຍຄວາມ ໄດ້ຮັບການປົກປ້ອງຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບທະນາຍຄວາມ, ສະພາທະນາຍຄວາມ, ວິສາຫະກິດກົດໝາຍ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ການບໍລິການ ແລະ ໃຊ້ການບໍລິການທາງດ້ານກົດໝາຍ ຢູ່ໃນດິນແດນ ຂອງ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທະນາຍຄວາມ ດ້ວຍການແລກປ່ຽນບົດຮຽນ, ການສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຂອງທະນາຍຄວາມ, ການຊ່ວຍເຫຼືອ ແລະ ວຽກງານອື່ນ ກ່ຽວກັບທະນາຍຄວາມ, ການປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ທະນາຍຄວາມ

**ມາດຕາ 9 (ປັບປຸງ) ເງື່ອນໄຂຂອງທະນາຍຄວາມ**

ບຸກຄົນ ທີ່ຈະເປັນທະນາຍຄວາມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນຄົນສັນຊາດລາວ ແລະ ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;

2. ມີຄຸນສົມບັດດີ, ມີຈັນຍາບັນ, ຈັນຍາທຳ, ທ່ຽງທຳ, ມີຄວາມບໍລິສຸດສັດຊື່ຕໍ່ ປະຊາຊົນ ແລະ ປະເທດຊາດ;

3. ມີລະດັບການສຶກສາກົດໝາຍຊັ້ນປະລິນຍາຕີຂຶ້ນໄປ;

4. ໄດ້ຮັບການຝຶກອົບຮົມວິຊາຊີບທະນາຍຄວາມ;

5. ໄດ້ຜ່ານການຝຶກງານວິຊາຊີບທະນາຍຄວາມ;

6. ສອບເສັງໄດ້ເປັນທະນາຍຄວາມ;

7. ຮູ້ພາສາຕ່າງປະເທດໃດໜຶ່ງ;

8. ບໍ່ຖືກວິໄນ ໃຫ້ອອກຈາກລັດຖະການ ຫຼື ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດ ໂດຍເຈດຕະນາ;

9. ບໍ່ແມ່ນພະນັກງານ-ລັດຖະກອນ, ທະຫານ ຫຼື ຕຳຫຼວດ ທີ່ຍັງປະຕິບັດໜ້າທີ່ຢູ່;

10. ມີສຸຂະພາບດີ.

**ມາດຕາ 10 ເງື່ອນໄຂການເປັນທະນາຍຄວາມ ສຳລັບຄົນຕ່າງດ້າວ ແລະ ຄົນຕ່າງປະເທດ**

ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງສະໝັກເຂົ້າເປັນທະນາຍຄວາມ ຢູ່ ສປປ ລາວ ນອກຈາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແຕ່ ຂໍ້ 2 ຫາ ຂໍ້ 10 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງມີເງື່ອນໄຂຕື່ມອີກ ດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຂົ້າມາເຮັດວຽກຢ່າງຖືກຕ້ອງ ຢູ່ ສປປ ລາວ ຫຼື ມີທີ່ຢູ່ຖາວອນ ຢູ່ ສປປ ລາວ;

2. ຮູ້ພາສາ, ວັດທະນະທຳລາວດີ ແລະ ມີລະດັບການສຶກສາກົດໝາຍຂອງ ສປປ ລາວ ຊັ້ນປະລິນຍາຕີຂຶ້ນໄປ.

**ມາດຕາ 11 ການຝຶກອົບຮົມວິຊາຊີບທະນາຍຄວາມ**

ບຸກຄົນທີ່ຈະເປັນທະນາຍຄວາມ ຕ້ອງໄດ້ຮັບການຝຶກອົບຮົມວິຊາຊີບທະນາຍຄວາມຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມຫຼັກສູດ ທີ່ກະຊວງຍຸຕິທຳ ວາງອອກ.

ບຸກຄົນທີ່ສຳເລັດການຝຶກອົບຮົມວິຊາຊີບທະນາຍຄວາມ ຈະໄດ້ຮັບໃບຢັ້ງຢືນຈາກລັດຖະມົນຕີ ກະຊວງຍຸຕິທຳ.

**ມາດຕາ 12 (ປັບປຸງ) ການຍົກເວັ້ນການຝຶກອົບຮົມວິຊາຊີບທະນາຍຄວາມ**

ບຸກຄົນທີ່ໄດ້ຮັບການຍົກເວັ້ນການຝຶກອົບຮົມວິຊາຊີບທະນາຍຄວາມ ມີ ດັ່ງນີ້:

1. ອະດີດຜູ້ພິພາກສາ, ພະນັກງານໄອຍະການ ທີ່ມີປະສົບການ ແຕ່ ສິບປີ ຂຶ້ນໄປ;

2. ສາດສະດາຈານ, ຮອງສາດສະດາຈານທາງດ້ານກົດໝາຍ;

3. ຜູ້ມີລະດັບການສຶກສາກົດໝາຍ ຊັ້ນປະລິນຍາຕີ ຂຶ້ນໄປ ແລະ ເຮັດວຽກງານກ່ຽວກັບກົດໝາຍ ແລະ ຍຸຕິທຳ ແຕ່ ສິບ ປີ ຂຶ້ນໄປ;

4. ຄູ, ອາຈານ ທີ່ໄດ້ສິດສອນກົດໝາຍ ແຕ່ ສິບ ປີ ຂຶ້ນໄປ.

**ມາດຕາ 13 (ປັບປຸງ) ການຝຶກງານວິຊາຊີບທະນາຍຄວາມ**

ບຸກຄົນທີ່ໄດ້ຮັບໃບຢັ້ງຢືນການຝຶກອົບຮົມວິຊາຊີບທະນາຍຄວາມ ຕ້ອງໄດ້ຜ່ານການຝຶກງານວິຊາຊີບທະນາຍຄວາມ ຢ່າງໜ້ອຍ ໜຶ່ງປີ.

ສະພາທະນາຍຄວາມ ເປັນຜູ້ອອກໃບຢັ້ງຢືນໃຫ້ຜູ້ສຳເລັດການຝຶກງານວິຊາຊີບທະນາຍຄວາມ.

ສຳລັບການຝຶກງານວິຊາຊີບທະນາຍຄວາມ ໄດ້ກຳນົດໄວ້ໃນລະບຽບການພາຍໃນຂອງສະພາທະນາຍຄວາມ.

**ມາດຕາ 14 (ປັບປຸງ) ການຍົກເວັ້ນ ຫຼື ຫຼຸດຜ່ອນການຝຶກງານວິຊາຊີບທະນາຍຄວາມ**

ບຸກຄົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 1, 2 ແລະ 3 ຂອງກົດໝາຍສະບັບນີ້ ໄດ້ຮັບການຍົກເວັ້ນການຝຶກງານວິຊາຊີບທະນາຍຄວາມ.

ສ່ວນບຸກຄົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 4 ຂອງກົດໝາຍສະບັບນີ້ ໄດ້ຮັບການຫຼຸດຜ່ອນການຝຶກງານວິຊາຊີບທະນາຍຄວາມ ຈາກ ໜຶ່ງປີ ມາເປັນ ຫົກເດືອນ.

**ມາດຕາ 15 (ປັບປຸງ) ການສອບເສັງເປັນທະນາຍຄວາມ**

ບຸກຄົນທີ່ຈະເປັນທະນາຍຄວາມ ຕ້ອງມີການສອບເສັງ ຍົກເວັ້ນ ບຸກຄົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

ການສອບເສັງເປັນທະນາຍຄວາມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ການແຕ່ງຕັ້ງທະນາຍຄວາມ**

ບຸກຄົນທີ່ຈະເປັນທະນາຍຄວາມ ຕ້ອງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງຍຸຕິທຳ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສະພາທະນາຍຄວາມໄດ້ສະເໜີ ເປັນຕົ້ນໄປ.

ຫຼັງຈາກໄດ້ຮັບການແຕ່ງຕັ້ງເປັນທະນາຍຄວາມແລ້ວ ຕ້ອງຂຶ້ນທະບຽນເປັນສະມາຊິກນຳສະພາທະນາຍຄວາມ ເພື່ອຮັບບັດທະນາຍຄວາມ ພ້ອມທັງເສຍຄ່າບຳລຸງເປັນສະມາຊິກ ຕາມກົດລະບຽບພາຍໃນ ຂອງສະພາທະນາຄວາມ.

**ມາດຕາ 17 (ປັບປຸງ) ການສິ້ນສຸດການເປັນທະນາຍຄວາມ**

ການເປັນທະນາຍຄວາມ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເສຍຊີວິດ;
2. ລາອອກຈາກການເປັນທະນາຍຄວາມ;
3. ຖືກລຶບຊື່ອອກຈາກການເປັນທະນາຍຄວາມ ຍ້ອນໄດ້ລະເມີດກົດໝາຍ ຫຼື ລະບຽບການ.

## ພາກທີ III

## ການໃຫ້ບໍລິການທາງດ້ານກົດໝາຍ ແລະ ການເຄື່ອນໄຫວວິຊາຊີບ

### ໝວດທີ 1

### ການໃຫ້ການບໍລິການທາງດ້ານກົດໝາຍ

**ມາດຕາ 18 (ໃໝ່) ເງື່ອນໄຂໃນການໃຫ້ບໍລິການທາງດ້ານກົດໝາຍ**

ທະນາຍຄວາມ ທີ່ຈະໃຫ້ການບໍລິການທາງດ້ານກົດໝາຍ ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ສັງກັດຢູ່ໜ່ວຍສະພາທະນາຍຄວາມປະຈຳເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ;

2. ສ້າງຕັ້ງວິສາຫະກິດກົດໝາຍເປັນຂອງຕົນເອງ ຫຼື ຮ່ວມກັບຜູ້ອື່ນ;

3. ເປັນທະນາຍຄວາມສັງກັດຢູ່ວິສາຫະກິດໃດໜຶ່ງ.

**ມາດຕາ 19 (ປັບປຸງ) ການເຂົ້າຮ່ວມໃນການດຳເນີນຄະດີອາຍາ**

ທະນາຍຄວາມ ສາມາດເຂົ້າຮ່ວມໃນການດຳເນີນຄະດີອາຍາ ນັບແຕ່ວັນທີ່ຕົນ ໄດ້ຮັບການມອບສິດ ຫຼື ການສະເໜີຢ່າງເປັນລາຍລັກອັກສອນ ຂອງລູກຄວາມ ຫຼື ສະມາຊິກຄອບຄົວ ຫຼື ການຈັດຕັ້ງຂອງຜູ້ກ່ຽວ ເປັນຕົ້ນໄປ.

ການມອບສິດໃຫ້ທະນາຍຄວາມ ວ່າຄວາມນັ້ນ ຕ້ອງໄດ້ຮັບການຢັ້ງຢືນຈາກໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ຂອງທະນາຍຄວາມໃນການດຳເນີນຄະດີອາຍາ**

ໃນການດຳເນີນຄະດີອາຍາ ທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພົບກັບລູກຄວາມ ຫຼື ຜູ້ທີ່ຈະເປັນລູກຄວາມ ຕາມການສະເໜີຂອງຜູ້ກ່ຽວ ພາຍຫຼັງຖືກກັກຕົວ, ຈັບຕົວ ຫຼື ຖືກກັກຂັງ;

2. ຮັບຊາບຂໍ້ກ່າວຫາໃສ່ລູກຄວາມ ແລະ ເຂົ້າຮ່ວມຮັບຟັງການເອົາຄຳໃຫ້ການຂອງລູກຄວາມຕົນ;

3. ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ;

4. ສະເໜີ ຫຼັກຖານ ແລະ ພະຍານ;

5. ສະເໜີຄ້ານຕົວ ຜູ້ພິພາກສາ, ພະນັກງານໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ;

6. ໃຫ້ຄຳເຫັນ, ສອບຖາມ ຜູ້ເຂົ້າຮ່ວມອື່ນ ໃນເວລາໄຕ່ສວນຄະດີໃນທີ່ປະຊຸມສານ;

7. ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ຂໍອຸທອນ, ຂໍລຶບລ້າງຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ຫຼື ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສີນ ຫຼື ຄຳພິພາກສາຂອງສານປະຊາຊົນ;

9. ສະເໜີ ປະກັນຕົວ ການປ່ອຍຕົວພາງລູກຄວາມຂອງຕົນ ຕາມກົດໝາຍ ແລະ ລະບຽບການ;

10. ໃຫ້ການຮ່ວມມືໃນການນຳຕົວລູກຄວາມຂອງຕົນ ທີ່ຖືກປ່ອຍຕົວພາງ ເຂົ້າມາສານປະຊາຊົນ ຫຼື ອົງການໄອຍະການປະຊາຊົນ;

11. ຮັບໝາຍຮຽກໃຫ້ຄູ່ຄວາມຂອງຕົນ ເຂົ້າຮ່ວມໃນການດຳເນີນຄະດີ;

12. ຮັບການແຕ່ງຕັ້ງໃຫ້ວ່າຄວາມ ໃນກໍລະນີການກະທຳຜິດທີ່ກົດໝາຍກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

13. ລາຍງານການເຄື່ອນໄຫວເຂົ້າຮ່ວມດຳເນີນຄະດີອາຍາຂອງຕົນ ຕໍ່ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ.

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 21 ການເຂົ້າຮ່ວມໃນການດຳເນີນຄະດີແພ່ງ

ທະນາຍຄວາມ ສາມາດເຂົ້າຮ່ວມໃນທຸກຂັ້ນຕອນຂອງການດຳເນີນຄະດີແພ່ງ ໃນຖານະເປັນຕົວແທນຂອງລູກຄວາມ. ຖ້າວ່າສານຫາກໄດ້ຕັດສິນ ຫຼື ພິພາກສາຄະດີແພ່ງ ໂດຍຊ້ອງໜ້າທະນາຍຄວາມແລ້ວ ການຕັດສິນ ຫຼື ການພິພາກສາຂອງສານນັ້ນ ໃຫ້ຖືວ່າເປັນການຊ້ອງໜ້າລູກຄວາມ.

### ມາດຕາ 22 (ປັບປຸງ) ສິດ ແລະ ໜ້າທີ່ຂອງທະນາຍຄວາມໃນການດຳເນີນຄະດີແພ່ງ

ໃນການດຳເນີນຄະດີແພ່ງ ທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຍື່ນຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍ;

2. ແນະນຳໃຫ້ລູກຄວາມຂອງຕົນໄກ່ເກ່ຍກັບຄູ່ກໍລະນີ ແລະ ສະເໜີໃຫ້ສານ ທຳການໄກ່ເກ່ຍຄູ່ຄວາມໃນຄະດີ;

3. ເບິ່ງເອກະສານ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ຢູ່ໃນສຳນວນຄະດີ;

4. ຊອກຫາ, ສະເໜີຫຼັກຖານ ແລະ ພະຍານ;

5. ເຂົ້າຮ່ວມການໄຕ່ສວນຄະດີ, ໃຫ້ຄຳເຫັນ ແລະ ສອບຖາມຜູ້ເຂົ້າຮ່ວມອື່ນ ໃນທີ່ປະຊຸມສານ;

6. ສະເໜີຄ້ານຕົວຜູ້ພິພາກສາ, ພະນັກງານໄອຍະການ, ຈ່າສານ, ຜູ້ຊ່ຽວຊານ ຫຼື ຜູ້ແປພາສາ;

7. ຄັດຄ້ານ ຫຼື ຮ້ອງທຸກ ຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ຂໍອຸທອນ ຫຼື ຂໍລົບລ້າງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານປະຊາຊົນ ຫຼື ຄຳສັ່ງຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

9. ລາຍງານການເຄື່ອນໄຫວເຂົ້າຮ່ວມດຳເນີນຄະດີແພ່ງຂອງຕົນ ຕໍ່ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 ການໃຫ້ຄຳປຶກສາທາງດ້ານກົດໝາຍ**

ການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນ ການໃຫ້ຄຳເຫັນ, ຄຳແນະນຳ, ຄຳອະທິບາຍທາງດ້ານກົດໝາຍ ທາງປາກເປົ່າ ຫຼື ເປັນລາຍລັກອັກສອນແກ່ລູກຄວາມ ຫຼື ຊ່ວຍເຫຼືອລູກຄວາມໃນການຮ່າງສັນຍາ, ພິໄນກຳ ແລະ ເອກະສານອື່ນ.

**ມາດຕາ 24 ຄ່າບໍລິການທາງດ້ານກົດໝາຍ**

ຄ່າບໍລິການທາງດ້ານກົດໝາຍ ແມ່ນ ຄ່າຕອບແທນທີ່ລູກຄວາມຈ່າຍໃຫ້ທະນາຍຄວາມໃນການໃຫ້ຄຳປຶກສາທາງດ້ານກົດໝາຍ ຫຼື ວ່າຄວາມ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ລະຫວ່າງລູກຄວາມ ກັບ ທະນາຍຄວາມ.

**ມາດຕາ 25 (ປັບປຸງ) ຄ່າໃຊ້ຈ່າຍໃຫ້ທະນາຍຄວາມທີ່ໄດ້ຮັບການແຕ່ງຕັ້ງ**

ຄ່າໃຊ້ຈ່າຍຕ່າງໆ ເປັນຕົ້ນ ຄ່າເດີນທາງ, ກິນຢູ່, ພັກເຊົາ ໃຫ້ທະນາຍຄວາມທີ່ໄດ້ຮັບການແຕ່ງຕັ້ງ ຕາມການສະເໜີຂອງສານປະຊາຊົນ ຫຼື ອົງການດຳເນີນຄະດີອື່ນ ເພື່ອໃຫ້ບໍລິການທາງດ້ານກົດໝາຍ ແກ່ຜູ້ກະທຳຜິດທີ່ກົດໝາຍກຳນົດໂທດປະຫານຊີວິດ ແລະ ບຸກຄົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃຫ້ປະຕິບັດຄືກັນກັບຄ່າໃຊ້ຈ່າຍ ໃນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວກັບການເງິນ.

**ມາດຕາ 26 (ປັບປຸງ) ການຊ່ວຍເຫຼືອລ້າທາງດ້ານກົດໝາຍ**

ການຊ່ວຍເຫຼືອລ້າທາງດ້ານກົດໝາຍ ແມ່ນ ການໃຫ້ບໍລິການທາງດ້ານກົດໝາຍ ແກ່ປະຊາຊົນ ທີ່ທຸກຍາກ ແລະ ດ້ອຍໂອກາດ ໂດຍບໍ່ຄິດຄ່າຜ່ານສະພາທະນາຍຄວາມ ແລະ ທະນາຍຄວາມ ເພື່ອສົ່ງເສີມການເຂົ້າເຖິງກົດໝາຍ ແລະ ຂະບວນການຍຸຕິທຳ.

## ໝວດທີ 2
## ການເຄື່ອນໄຫວວິຊາຊີບທະນາຍຄວາມ

**ມາດຕາ 27 ການຮັກສາຄວາມລັບຂອງລູກຄວາມ**

ທະນາຍຄວາມ ແລະ ວິສາຫະກິດກົດໝາຍ ຕ້ອງຮັກສາຂໍ້ມູນທີ່ລູກຄວາມສື່ສານກັບຕົນໄວ້ເປັນຄວາມລັບ ລວມທັງຂໍ້ມູນທີ່ທະນາຍຄວາມສື່ສານກັບລູກຄວາມ ຫຼື ຜູ້ທີ່ຈະເປັນລູກຄວາມ.

ບຸກຄົນ ແລະ ການຈັດຕັ້ງ ຕ້ອງເຄົາລົບການຮັກສາຄວາມລັບທີ່ກ່າວໄວ້ໃນວັກທີ 1 ເທິງນີ້ ແລະ ບໍ່ມີສິດບັງຄັບທະນາຍຄວາມ ແລະ ວິສາຫະກິດກົດໝາຍ ໃຫ້ເປີດເຜີຍຄວາມລັບດັ່ງກ່າວ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກລູກຄວາມເທົ່ານັ້ນ.

**ມາດຕາ 28 ການເຄົາລົບຈັນຍາບັນທະນາຍຄວາມ**

ທະນາຍຄວາມທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດຈັນຍາບັນທະນາຍຄວາມຢ່າງເຂັ້ມງວດ ໃນການເຄື່ອນໄຫວໃຫ້ການບໍລິການທາງດ້ານກົດໝາຍ ລວມທັງການດຳລົງຊີວິດໃນສັງຄົມ.

**ມາດຕາ 29 ຄວາມເປັນເອກະລາດຂອງທະນາຍຄວາມ**

ທະນາຍຄວາມ ມີຄວາມເປັນເອກະລາດໃນການໃຫ້ບໍລິການທາງດ້ານກົດໝາຍ ແກ່ລູກຄວາມ ບົນພື້ນຖານກົດໝາຍ ແລະ ລະບຽບການ, ຈັນຍາບັນທະນາຍຄວາມ ໂດຍປາສະຈາກການແຊກແຊງ ແລະ ກີດຂວາງຂອງອົງການຈັດຕັ້ງ, ລູກຄວາມ ຫຼື ບຸກຄົນອື່ນ.

## ພາກທີ IV
## ສະພາທະນາຍຄວາມ

**ມາດຕາ 30 (ປັບປຸງ) ສະພາທະນາຍຄວາມ**

ສະພາທະນາຍຄວາມ ແມ່ນ ການຈັດຕັ້ງສັງຄົມວິຊາຊີບຂອງທະນາຍຄວາມ ຢູ່ ສປປ ລາວ ທີ່ສ້າງຕັ້ງຂຶ້ນ ໂດຍບໍ່ຫວັງຜົນກຳໄລ ເພື່ອສົ່ງເສີມວິຊາຊີບທະນາຍຄວາມ, ເຕົ້າໂຮມຄວາມສາມັກຄີ ແລະ ປົກປ້ອງກຽດຊື່ສຽງ ຂອງທະນາຍຄວາມ ແນໃສ່ຮັບປະກັນການບໍລິການທາງດ້ານກົດໝາຍ ໃຫ້ແກ່ສັງຄົມ ຢ່າງກວ້າງຂວາງ, ຍຸຕິທຳ ແລະ ມີປະສິດທິພາບ ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ.

ສະພາທະນາຍຄວາມ ເຄື່ອນໄຫວຢ່າງອິດສະລະ ແລະ ເປັນເອກະລາດທາງດ້ານການຈັດຕັ້ງ ແລະ ການເງິນ ພາຍໃຕ້ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 31 (ປັບປຸງ) ອົງປະກອບຂອງສະພາທະນາຍຄວາມ**

ອົງປະກອບຂອງສະພາທະນາຍຄວາມ ແມ່ນ ພາກສ່ວນຕ່າງໆຂອງສະພາທະນາຍຄວາມ ຊຶ່ງມີ ດັ່ງນີ້:

1. ສະມາຊິກສະພາທະນາຍຄວາມ;
2. ກອງປະຊຸມໃຫຍ່ທະນາຍຄວາມ;
3. ຄະນະບໍລິຫານງານສະພາທະນາຍຄວາມ;
4. ຄະນະປະຈຳສະພາທະນາຍຄວາມ;
5. ຄະນະກວດກາສະພາທະນາຍຄວາມ;
6. ຫ້ອງການສະພາທະນາຍຄວາມ;
7. ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ;
8. ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ.

ສະພາທະນາຍຄວາມ ມີກົດລະບຽບພາຍໃນຂອງຕົນ.

## ໝວດທີ 1
## ສະມາຊິກສະພາທະນາຍຄວາມ

**ມາດຕາ 32 (ປັບປຸງ) ສະມາຊິກສະພາທະນາຍຄວາມ**

ສະມາຊິກສະພາທະນາຍຄວາມ ແມ່ນ ທະນາຍຄວາມທຸກຄົນ ທີ່ໄດ້ຂຶ້ນທະບຽນນຳສະພາທະນາຍຄວາມ.

ສະມາຊິກສະພາທະນາຍຄວາມ ທີ່ມີອາຍຸການເປັນທະນາຍຄວາມ ແຕ່ ຊາວປີຂຶ້ນໄປ ແລະ ມີຜົນງານດີເດັ່ນ ຈະຖືກຄັດເລືອກເປັນທະນາຍຄວາມກິດຕິມະສັກ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ຂອງສະມາຊິກສະພາທະນາຍຄວາມ**

ສະມາຊິກສະພາທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມໃຫຍ່ທະນາຍຄວາມ;
2. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງເປັນຄະນະບໍລິຫານງານ ຫຼື ຄະນະກວດກາສະພາທະນາຍຄວາມ;
3. ສະເໜີຄຳເຫັນ, ຊັກຖາມ ກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານ ແລະ ຄະນະກວດກາ ສະພາທະນາຍຄວາມ;
4. ລົງຄະແນນສຽງຮັບຮອງເອົາບັນຫາທີ່ນຳມາພິຈາລະນາໃນກອງປະຊຸມໃຫຍ່ທະນາຍຄວາມ;
5. ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ດ້ານວິຊາຊີບທະນາຍຄວາມ;
6. ເຂົ້າຮ່ວມການຝຶກອົບຮົມວຽກງານທະນາຍຄວາມພາກບັງຄັບ ທີ່ສະພາທະນາຍຄວາມ ຫຼື ພາກສ່ວນທີ່ກ່ຽວຂ້ອງຈັດຂຶ້ນ;
7. ໂຄສະນາ ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການ ໃຫ້ປະຊາຊົນ;
8. ຊ່ວຍເຫຼືອລ້າທາງດ້ານກົດໝາຍແກ່ປະຊາຊົນ ຕາມກົດໝາຍ ແລະ ລະບຽບການ;
9. ເສຍຄ່າບຳລຸງການເປັນສະມາຊິກສະພາທະນາຍຄວາມ ຕາມລະບຽບການ;
10. ປະກອບສ່ວນເຂົ້າໃນງົບປະມານຂອງສະພາທະນາຍຄວາມ ຕາມລາຍໄດ້ໃນການໃຫ້ບໍລິການທາງດ້ານກົດໝາຍຂອງຕົນ;
11. ເຂົ້າຮ່ວມວຽກງານ, ຂະບວນການ ຫຼື ກິດຈະການທີ່ສະພາທະນາຍຄວາມຈັດຂຶ້ນ;
12. ລາຍງານກ່ຽວກັບການເຄື່ອນໄຫວໃຫ້ບໍລິການທາງດ້ານກົດໝາຍຂອງຕົນ ຕໍ່ສະພາທະນາຍຄວາມ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຄະນະບໍລິຫານງານສະພາທະນາຍຄວາມ.

**ມາດຕາ 34 ການສິ້ນສຸດການເປັນສະມາຊິກສະພາທະນາຍຄວາມ**

ການເປັນສະມາຊິກສະພາທະນາຍຄວາມ ຈະສິ້ນສຸດລົງ ພ້ອມດຽວກັນກັບການສິ້ນສຸດການເປັນທະນາຍຄວາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ກອງປະຊຸມໃຫຍ່ທະນາຍຄວາມ

**ມາດຕາ 35 (ປັບປຸງ) ກອງປະຊຸມໃຫຍ່ທະນາຍຄວາມ**

ກອງປະຊຸມໃຫຍ່ທະນາຍຄວາມ ແມ່ນ ການຈັດຕັ້ງສູງສຸດຂອງທະນາຍຄວາມ ທີ່ມີສິດຕົກລົງບັນຫາສຳຄັນກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຍຄວາມ. ກອງປະຊຸມໃຫຍ່ທະນາຍຄວາມ ປະກອບດ້ວຍ ທະນາຍຄວາມທີ່ເປັນສະມາຊິກທັງໝົດ ຊຶ່ງເປີດຂຶ້ນຢ່າງໜ້ອຍປີລະຄັ້ງ.

ໃນກໍລະນີທີ່ຈຳເປັນ ແລະ ຮີບດ່ວນ ກໍສາມາດເປີດກອງປະຊຸມໃຫຍ່ສະໄໝວິສາມັນຂຶ້ນໄດ້ທຸກເວລາ ຕາມການສະເໜີຂອງຄະນະບໍລິຫານງານ, ຄະນະປະຈຳ, ຄະນະກວດກາສະພາທະນາຍຄວາມ ຫຼື ສະມາຊິກສະພາທະນາຍຄວາມ ຢ່າງໜ້ອຍ ໜຶ່ງສ່ວນສີ່ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມໃຫຍ່ສະພາທະນາຍຄວາມ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 36 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງປະຊຸມໃຫຍ່ທະນາຍຄວາມ**

ກອງປະຊຸມໃຫຍ່ທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ, ບົດສະຫຼຸບການເງິນ ແລະ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ ແລະ ແຜນການການເງິນຂອງສະພາທະນາຍຄວາມ;

2. ພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາ ວິຊາຊີບທະນາຍຄວາມ, ກົດລະບຽບພາຍໃນ ແລະ ລະບຽບການຕ່າງໆ ຂອງສະພາທະນາຍຄວາມ;

3. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຄະນະບໍລິຫານງານ ແລະ ຄະນະກວດກາສະພາທະນາຍຄວາມ ຫຼື ກຳມະການຜູ້ໃດໜຶ່ງ ຂອງຄະນະດັ່ງກ່າວ;

4. ພິຈາລະນາ, ຄົ້ນຄວ້າການສ້າງ ແລະ ປັບປຸງກົດໝາຍ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ;

5. ຮັບຟັງການລາຍງານຂອງໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ຫຼື ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ແລະ ວິສາຫະກິດທີ່ມີຜົນງານດີເດັ່ນ;

6. ກຳນົດເບັ້ຍປະຊຸມ ຫຼື ນະໂຍບາຍ ໃຫ້ຄະນະບໍລິຫານງານ ແລະ ຄະນະກວດກາສະພາທະນາຍຄວາມ;

7. ພິຈາລະນາບັນຫາອື່ນ ທີ່ສຳຄັນ.

**ມາດຕາ 37 (ປັບປຸງ) ມະຕິກອງປະຊຸມ**

ມະຕິກອງປະຊຸມໃຫຍ່ທະນາຍຄວາມ ຈະມີຄຸນຄ່າໃຊ້ໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ.

## ໝວດທີ 3
## ຄະນະບໍລິຫານງານສະພາທະນາຍຄວາມ

**ມາດຕາ 38 (ປັບປຸງ) ຄະນະບໍລິຫານງານສະພາທະນາຍຄວາມ**

ຄະນະບໍລິຫານງານສະພາທະນາຍຄວາມ ເປັນຕົວແທນ ແລະ ປະຕິບັດໜ້າທີ່ແທນກອງປະຊຸມໃຫຍ່ທະນາຍຄວາມ ໃນລະຫວ່າງສອງກອງປະຊຸມໃຫຍ່ທະນາຍຄວາມ ລວມທັງປະຕິບັດການຕິດຕາມ, ກວດກາການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາທະນາຍຄວາມ, ຫ້ອງການສະພາທະນາຍຄວາມ, ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ, ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ແລະ ທະນາຍຄວາມ.

ຄະນະບໍລິຫານງານສະພາທະນາຍຄວາມ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ.

ຄະນະບໍລິຫານງານສະພາທະນາຍຄວາມ ມີອາຍຸການ ຫ້າປີ ແລະ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມໃຫຍ່ທະນາຍຄວາມ.

ຄະນະບໍລິຫານງານສະພາທະນາຍຄວາມ ເປີດປະຊຸມຢ່າງໜ້ອຍ ສາມເດືອນຕໍ່ຄັ້ງ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງບັນຫາທີ່ສຳຄັນກ່ຽວກັບວຽກງານທະນາຍຄວາມ.

**ມາດຕາ 39 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະບໍລິຫານງານສະພາທະນາຍຄວາມ**

ຄະນະບໍລິຫານງານສະພາທະນາຍຄວາມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳການກະກຽມ ແລະ ຮຽກໂຮມກອງປະຊຸມໃຫຍ່ທະນາຍຄວາມ;

2. ສະຫຼຸບ ແລະ ສະເໜີ ແຜນການເຄື່ອນໄຫວວຽກງານ ແລະ ການເງິນຂອງສະພາທະນາຍຄວາມ, ແຜນພັດທະນາວິຊາຊີບທະນາຍຄວາມ, ກົດລະບຽບພາຍໃນ ແລະ ລະບຽບການຕ່າງໆ ຂອງສະພາທະນາຍຄວາມ ຕໍ່ກອງປະຊຸມໃຫຍ່ທະນາຍຄວາມ;

3. ຊີ້ນຳ ນຳພາ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານທະນາຍຄວາມ;

4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຄະນະປະຈຳສະພາທະນາຍຄວາມ ຫຼື ກຳມະການໃດໜຶ່ງໃນຄະນະດັ່ງກ່າວ;

5. ແຕ່ງຕັ້ງຄະນະວິໄນທອນ;

6. ຕັກເຕືອນ ຫຼື ລົງວິໄນຕໍ່ທະນາຍຄວາມ ຕາມການສະເໜີຂອງຄະນະກວດກາສະພາທະນາຍຄວາມ ຫຼື ຄະນະວິໄນທອນ;

7. ອອກ ຫຼື ຖອນ ບັດທະນາຍຄວາມ;

8. ປະສານສົມທົບ ແລະ ປຶກສາຫາລື ວຽກງານທະນາຍຄວາມກັບພາກສ່ວນທີ່ກ່ຽວຂ້ອງ;

9. ໄດ້ຮັບເບັ້ຍປະຊຸມ ແລະ ນະໂຍບາຍອື່ນ ຕາມກົດລະບຽບພາຍໃນຂອງສະພາທະນາຍຄວາມ;

10. ລາຍງານການເຄື່ອນໄຫວຂອງສະພາທະນາຍຄວາມ ແລະ ທະນາຍຄວາມ ຕໍ່ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ປະທານ ແລະ ຮອງປະທານ ຄະນະບໍລິຫານງານສະພາທະນາຍຄວາມ**

ປະທານຄະນະບໍລິຫານງານສະພາທະນາຍຄວາມ ເປັນຜູ້ຊີ້ນຳລວມ, ຕິດຕາມ, ຊຸກຍູ້ ແລະ ແກ້ໄຂວຽກງານປະຈຳວັນຂອງສະພາທະນາຍຄວາມ.

ຮອງປະທານຄະນະບໍລິຫານງານສະພາທະນາຍຄວາມ ມີໜ້າທີ່ຊ່ວຍປະທານ ໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານ.

ສິດ ແລະ ໜ້າທີ່ຂອງປະທານ, ຮອງປະທານ ແລະ ກຳມະການ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

## ໝວດທີ 4
## ຄະນະປະຈຳສະພາທະນາຍຄວາມ

**ມາດຕາ 41 (ໃໝ່) ຄະນະປະຈຳສະພາທະນາຍຄວາມ**

ຄະນະປະຈຳສະພາທະນາຍຄວາມ ເປັນຜູ້ບໍລິຫານວຽກງານປະຈຳວັນ ຂອງສະພາທະນາຍຄວາມ ຕາມແຜນການທີ່ກອງປະຊຸມໃຫຍ່ທະນາຍຄວາມ ແລະ ຄະນະບໍລິຫານງານສະພາທະນາຍຄວາມຮັບຮອງ.

ຄະນະປະຈຳສະພາທະນາຍຄວາມ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍຄະນະບໍລິຫານງານສະພາທະນາຍຄວາມ, ມີອາຍຸການເທົ່າກັບອາຍຸການຂອງຄະນະບໍລິຫານງານສະພາທະນາຍຄວາມ.

ຄະນະປະຈຳສະພາທະນາຍຄວາມ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ຖືກເລືອກຕັ້ງຈາກກຳມະການຄະນະບໍລິຫານງານສະພາທະນາຍຄວາມ.

**ມາດຕາ 42 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາທະນາຍຄວາມ**

ຄະນະປະຈຳສະພາທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ, ຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວວຽກງານຂອງທະນາຍຄວາມ;
2. ກະກຽມ ແລະ ຮຽກໂຮມກອງປະຊຸມໃຫຍ່ທະນາຍຄວາມ;
3. ຄົ້ນຄວ້າ ສ້າງ ຫຼື ສະເໜີປັບປຸງ ແຜນການເຄື່ອນໄຫວວຽກງານ ແລະ ການເງິນຂອງສະພາທະນາຍຄວາມ, ແຜນພັດທະນາວິຊາຊີບທະນາຍຄວາມ, ຈັນຍາບັນທະນາຍຄວາມ, ກົດລະບຽບພາຍໃນ ແລະ ລະບຽບການຕ່າງໆຂອງສະພາທະນາຍຄວາມ ແລ້ວນຳສະເໜີຕໍ່ຄະນະບໍລິຫານງານສະພາທະນາຍຄວາມ;
4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຢູ່ຫ້ອງການສະພາທະນາຍຄວາມ, ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ແລະ ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ;
5. ໄດ້ຮັບເງິນອຸດໜູນ ແລະ ນະໂຍບາຍອື່ນ ຕາມກົດລະບຽບພາຍໃນຂອງສະພາທະນາຍຄວາມ;
6. ປະສານສົມທົບ ແລະ ປຶກສາຫາລື ວຽກງານທະນາຍຄວາມກັບພາກສ່ວນທີ່ກ່ຽວຂ້ອງ;
7. ລາຍງານການເຄື່ອນໄຫວວຽກງານຂອງຕົນ ແລະ ຂອງທະນາຍຄວາມ ຕໍ່ຄະນະບໍລິຫານງານສະພາທະນາຍຄວາມ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາທະນາຍຄວາມ**

ສິດ ແລະ ໜ້າທີ່ ຂອງປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາທະນາຍຄວາມ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

## ໝວດທີ 5

## ຄະນະກວດກາສະພາທະນາຍຄວາມ

**ມາດຕາ 44 (ປັບປຸງ) ຄະນະກວດກາສະພາທະນາຍຄວາມ**

ຄະນະກວດກາສະພາທະນາຍຄວາມ ເປັນຕົວແທນໃນການປະຕິບັດໜ້າທີ່ກວດກາການເຄື່ອນໄຫວວຽກງານຂອງ ຄະນະບໍລິຫານງານ, ຄະນະປະຈຳ, ການຈັດຕັ້ງອື່ນ ຂອງສະພາທະນາຍຄວາມ ແລະ ທະນາຍຄວາມ.

ຄະນະກວດກາສະພາທະນາຍຄວາມ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ. ຄະນະກວດກາ ມີອາຍຸການ ຫ້າປີ ແລະ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມໃຫຍ່ທະນາຍຄວາມ.

ຄະນະກວດກາ ເປີດປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ຄັ້ງ ເພື່ອສະຫຼຸບຜົນຂອງການກວດກາ ແລະ ການເຄື່ອນໄຫວວຽກງານຂອງຕົນ.

ຄະນະກວດກາສະພາທະນາຍຄວາມ ບໍ່ແມ່ນບຸກຄົນດຽວກັນກັບຄະນະບໍລິຫານງານສະພາທະນາຍຄວາມ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກວດກາສະພາທະນາຍຄວາມ**

ຄະນະກວດກາສະພາທະນາຍຄວາມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນ ແຕ່ລະໄລຍະ;
2. ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານຂອງ ຄະນະບໍລິຫານງານ, ຄະນະປະຈຳ, ຫ້ອງການສະພາທະນາຍຄວາມ, ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ແລະ ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ ແລະ ທະນາຍຄວາມ ລວມທັງການເງິນ ແລະ ຊັບສິນ ຂອງສະພາທະນາຍຄວາມ;
3. ສະເໜີຄະນະບໍລິຫານງານສະພາທະນາຍຄວາມ ພິຈາລະນາ ຍ້ອງຍໍ, ປະຕິບັດນະໂຍບາຍອື່ນ ຫຼື ລົງວິໄນຕໍ່ການຈັດຕັ້ງທະນາຍຄວາມ ແລະ ທະນາຍຄວາມ;
4. ຮັບ ແລະ ຄົ້ນຄວ້າ ຄຳຮ້ອງ ຫຼື ຄຳສະເໜີກ່ຽວກັບການເຄື່ອນໄຫວວຽກງານສະພາທະນາຍຄວາມ ແລະ ທະນາຍຄວາມ ເພື່ອສະເໜີຄະນະບໍລິຫານງານສະພາທະນາຍຄວາມ ພິຈາລະນາແກ້ໄຂ;
5. ໄດ້ຮັບເບ້ຍປະຊຸມ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ;
6. ລາຍງານວຽກງານກວດກາ ຕໍ່ກອງປະຊຸມໃຫຍ່ທະນາຍຄວາມ ລວມທັງສະເໜີປັບປຸງ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານ, ຮອງປະທານ ແລະ ກຳມະການຄະນະກວດກາສະພາທະນາຍຄວາມ**

ສິດ ແລະ ໜ້າທີ່ ຂອງປະທານ, ຮອງປະທານ ແລະ ກຳມະການຄະນະກວດກາສະພາທະນາຍຄວາມ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

## ໝວດທີ 6
## ຫ້ອງການສະພາທະນາຍຄວາມ

**ມາດຕາ 47 (ປັບປຸງ) ຫ້ອງການສະພາທະນາຍຄວາມ**

ຫ້ອງການສະພາທະນາຍຄວາມ ແມ່ນ ກົງຈັກການຈັດຕັ້ງບໍລິຫານຂອງສະພາທະນາຍຄວາມ ທີ່ຊ່ວຍວຽກຄະນະປະຈຳສະພາທະນາຍຄວາມ, ມີພາລະບົດບາດ ຄຸ້ມຄອງ ແລະ ບໍລິຫານວຽກງານປະຈຳວັນ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາທະນາຍຄວາມ ແລະ ທະນາຍຄວາມໃນຂອບເຂດທົ່ວປະເທດ.

ຫ້ອງການສະພາທະນາຍຄວາມ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ.

ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຂອງຫ້ອງການສະພາທະນາຍຄວາມຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາທະນາຍຄວາມ.

**ມາດຕາ 48 ສິດ, ໜ້າທີ່ ແລະ ໂຄງປະກອບຂອງຫ້ອງການສະພາທະນາຍຄວາມ**

ສິດ, ໜ້າທີ່ ແລະ ໂຄງປະກອບຂອງຫ້ອງການສະພາທະນາຍຄວາມ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

## ໝວດທີ 7
## ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ

**ມາດຕາ 49 (ໃໝ່) ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ**

ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ແມ່ນ ກົງຈັກການຈັດຕັ້ງຂອງສະພາທະນາຍຄວາມ ທີ່ສ້າງຕັ້ງຂຶ້ນ ຢູ່ ແຂວງ, ນະຄອນຫຼວງ ບ່ອນທີ່ມີເງື່ອນໄຂ, ມີພາລະບົດບາດບໍລິຫານວຽກງານປະຈຳວັນ, ຄຸ້ມຄອງການເຄື່ອນໄຫວຂອງໜ່ວຍສະພາທະນາຍຄວາມ ແລະ ທະນາຍຄວາມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ຫົວໜ້າ, ຮອງຫົວໜ້າຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາທະນາຍຄວາມ.

ຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ.

**ມາດຕາ 50 (ໃໝ່) ສິດ, ໜ້າທີ່ ແລະ ໂຄງປະກອບຂອງຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ**

ສິດ, ໜ້າທີ່ ແລະ ໂຄງປະກອບຂອງຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

## ໝວດທີ 8
## ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ

**ມາດຕາ 51 (ໃໝ່) ໜ່ວຍສະພາທະນາຍຄວາມປະຈຳ ເມືອງ, ເທດສະບານ, ນະຄອນ**

ໜ່ວຍສະພາທະນາຍຄວາມ ແມ່ນ ການຈັດຕັ້ງຮາກຖານຂອງສະພາທະນາຍຄວາມ ທີ່ສ້າງຕັ້ງຂຶ້ນ ຢູ່ ເມືອງ, ເທດສະບານ, ນະຄອນ ບ່ອນມີເງື່ອນໄຂ, ມີພາລະບົດບາດ ບໍລິຫານວຽກງານປະຈຳວັນ, ຄຸ້ມຄອງການເຄື່ອນໄຫວຂອງທະນາຍຄວາມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ໜ່ວຍສະພາທະນາຍຄວາມ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ.

ຫົວໜ້າ, ຮອງຫົວໜ້າ ໜ່ວຍສະພາທະນາຍຄວາມ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາທະນາຍຄວາມ ຕາມການສະເໜີຂອງຫ້ອງການສະພາທະນາຍຄວາມປະຈຳ ແຂວງ, ນະຄອນຫຼວງ.

**ມາດຕາ 52 (ໃໝ່) ສິດ, ໜ້າທີ່ ແລະ ໂຄງປະກອບຂອງໜ່ວຍສະພາທະນາຍຄວາມ**

ສິດ, ໜ້າທີ່ ແລະ ໂຄງປະກອບຂອງໜ່ວຍສະພາທະນາຍຄວາມ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

# ພາກທີ V
# ວິສາຫະກິດກົດໝາຍ
## ໝວດທີ 1
## ການສ້າງຕັ້ງວິສາຫະກິດກົດໝາຍ

**ມາດຕາ 53 (ປັບປຸງ) ການສ້າງຕັ້ງວິສາຫະກິດກົດໝາຍ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດກົດໝາຍ ໃຫ້ຍື່ນຄຳຮ້ອງຂໍສ້າງຕັ້ງຕໍ່ ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຕ້ອງໄດ້ຮັບການອະນຸຍາດທາງດ້ານວິຊາການຈາກກະຊວງຍຸຕິທຳ ໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ.

ວິສາຫະກິດກົດໝາຍ ອະນຸຍາດໃຫ້ສ້າງຕັ້ງໄດ້ໃນຮູບແບບ ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດຈຳກັດ.

ຜູ້ສະເໜີຂໍສ້າງຕັ້ງວິສາຫະກິດກົດໝາຍ ຕ້ອງແມ່ນທະນາຍຄວາມ ຫຼື ມີທະນາຍຄວາມເປັນຂາຮຸ້ນ ຫຼື ຜູ້ຖືຮຸ້ນໃນວິສາຫະກິດນັ້ນ ແລະ ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 54 ການອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ**

ການອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ ແມ່ນ ການຕົກລົງເຫັນດີທາງດ້ານວິຊາການຂອງກະຊວງຍຸຕິທຳ ໃຫ້ຜູ້ຂໍສ້າງຕັ້ງວິສາຫະກິດ ແລະ ເຄື່ອນໄຫວໃຫ້ບໍລິການທາງດ້ານກົດໝາຍ.

ກະຊວງຍຸຕິທຳ ຕ້ອງພິຈາລະນາ ແລະ ອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ ເມື່ອເຫັນວ່າມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງພາຍໃນກຳນົດເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ການອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ ເປັນເງື່ອນໄຂປະກອບໃນການອອກທະບຽນວິສາຫະກິດຂອງ ຂະແໜງການອຸດສາຫະກຳ ແລະ ການຄ້າ.

ໃນກໍລະນີບໍ່ອະນຸຍາດນັ້ນ ກະຊວງຍຸຕິທຳ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີຊາບ ພາຍໃນກຳນົດເວລາ ທີ່ໄດ້ກຳນົດໄວ້ໃນວັກສອງເທິງນີ້.

ການເຄື່ອນໄຫວບໍລິການທາງດ້ານກົດໝາຍ ໃຫ້ເລີ່ມແຕ່ວັນທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ແລະ ມີຜົນໃຊ້ໄດ້ຕະຫຼອດໄປ ຈົນກວ່າວິສາຫະກິດນັ້ນ ຈະສິ້ນສຸດລົງ.

**ມາດຕາ 55 (ປັບປຸງ) ການດຳເນີນກິດຈະການຂອງວິສາຫະກິດກົດໝາຍ**

ວິສາຫະກິດກົດໝາຍ ມີ ສິດ ແລະ ໜ້າທີ່ ເຄື່ອນໄຫວໃຫ້ການບໍລິການທາງດ້ານກົດໝາຍໃນນາມຂອງຕົນ ລວມທັງການວ່າຄວາມຢູ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19, 20, 21, 22 ແລະ 23 ຂອງກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 56 (ປັບປຸງ) ການຖອນໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ**

ໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ ອາດຈະຖືກຖອນ ໂດຍກະຊວງຍຸຕິທຳ ເມື່ອມີກໍລະນີໃດໜຶ່ງ ດັ່ງນີ້:

1. ບໍລິການທາງດ້ານກົດໝາຍ ບໍ່ຖືກຕ້ອງຕາມຈຸດປະສົງທີ່ໄດ້ຮັບອະນຸຍາດ;
2. ຂາຍ, ມອບ, ໂອນ ຫຼື ເອົາໃບທະບຽນວິສາຫະກິດກົດໝາຍ ໃຫ້ຜູ້ອື່ນນຳໃຊ້;
3. ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
4. ຖືກຖອນບັດທະນາຍຄວາມ.

ພາຍຫຼັງທີ່ກະຊວງຍຸຕິທຳ ໄດ້ຖອນໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ ຕ້ອງແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການເຄື່ອນໄຫວວິຊາຊີບທະນາຍຄວາມຕ່າງປະເທດ

### ມາດຕາ 57 (ປັບປຸງ) ທະນາຍຄວາມຕ່າງປະເທດ

ທະນາຍຄວາມຕ່າງປະເທດ ແມ່ນ ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບທະນາຍຄວາມ ຈາກອົງການທີ່ມີອຳນາດຂອງປະເທດໃດໜຶ່ງ ແລະ ການອະນຸຍາດດັ່ງກ່າວຍັງມີຜົນສັກສິດຢູ່.

ທະນາຍຄວາມຕ່າງປະເທດ ທີ່ມາເຮັດວຽກປະຈຳຕາມສັນຍາ ຢູ່ວິສາຫະກິດກົດໝາຍ ຢູ່ ສປປ ລາວ ຕ້ອງໄດ້ຮັບການອະນຸຍາດຈາກກະຊວງຍຸຕິທຳ ແລະ ໄດ້ຂຶ້ນທະບຽນນຳສະພາທະນາຍຄວາມເສຍກ່ອນ ຈຶ່ງມີສິດໃຫ້ຄຳປຶກສາກ່ຽວກັບກົດໝາຍຕ່າງປະເທດ ແລະ ກົດໝາຍສາກົນໄດ້, ແຕ່ຫາກບໍ່ມີສິດໃຫ້ຄຳປຶກສາກ່ຽວກັບກົດໝາຍລາວ ແລະ ວ່າຄວາມ ຢູ່ ສານປະຊາຊົນ ຂອງ ສປປ ລາວ.

ທະນາຍຄວາມຕ່າງປະເທດ ທີ່ໄດ້ຂຶ້ນທະບຽນນຳສະພາທະນາຍຄວາມ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້ ຍົກເວັ້ນ ຂໍ້ 2 ແລະ ຂໍ້ 4 ຂອງມາດຕາດັ່ງກ່າວ.

### ມາດຕາ 58 ວິສາຫະກິດກົດໝາຍຕ່າງປະເທດ

ວິສາຫະກິດກົດໝາຍຕ່າງປະເທດທີ່ຂຶ້ນທະບຽນ ຢູ່ ສປປ ລາວ ມີສິດໃຫ້ຄຳປຶກສາກ່ຽວກັບກົດໝາຍຕ່າງປະເທດ ແລະ ກົດໝາຍສາກົນ.

ວິສາຫະກິດກົດໝາຍຕ່າງປະເທດ ທີ່ມີທະນາຍຄວາມລາວ ຮ່ວມລົງທຶນ ຫຼື ສັງກັດ ມີສິດໃຫ້ຄຳປຶກສາກ່ຽວກັບກົດໝາຍລາວ ແລະ ວ່າຄວາມ ຢູ່ ສານປະຊາຊົນ ຂອງ ສປປ ລາວ ໂດຍທະນາຍຄວາມລາວຜູ້ນັ້ນ.

### ມາດຕາ 59 ການສ້າງຕັ້ງສາຂາວິສາຫະກິດກົດໝາຍຕ່າງປະເທດ

ວິສາຫະກິດກົດໝາຍຕ່າງປະເທດ ມີສິດສ້າງຕັ້ງສາຂາຂອງຕົນຂຶ້ນ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

# ພາກທີ VI
# ກອງທຶນຊ່ວຍເຫຼືອທາງດ້ານກົດໝາຍ

### ມາດຕາ 60 ກອງທຶນຊ່ວຍເຫຼືອທາງດ້ານກົດໝາຍ

ກອງທຶນຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນ ກອງທຶນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງຍຸຕິທຳ, ສ້າງຕັ້ງຂຶ້ນ ເພື່ອໃຫ້ການຊ່ວຍເຫຼືອລ້າທາງດ້ານກົດໝາຍ ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ ທີ່ມີຄະດີ ຫຼື ຕ້ອງການຄວາມຊ່ວຍເຫຼືອທາງດ້ານກົດໝາຍ ຫຼື ຜູ້ກະທຳຜິດ ທີ່ກົດໝາຍ ກຳນົດໂທດປະຫານຊີວິດ ແລະ ບຸກຄົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໄດ້ເຂົ້າເຖິງການບໍລິການທາງດ້ານກົດໝາຍ.

### ມາດຕາ 61 ແຫຼ່ງທຶນ

ກອງທຶນຊ່ວຍເຫຼືອທາງດ້ານກົດໝາຍ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ການເຄື່ອນໄຫວກິດຈະກຳທາງສັງຄົມ ແລະ ແຫຼ່ງອື່ນ ທີ່ໄດ້ມາຢ່າງຖືກຕ້ອງ.

### ມາດຕາ 62 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້

ກອງທຶນຊ່ວຍເຫຼືອທາງດ້ານກົດໝາຍ ຈະຖືກນຳໃຊ້ເຂົ້າໃນການບໍລິການທາງດ້ານກົດໝາຍ ເປັນຕົ້ນ ຄ່າເດີນທາງ, ຄ່າກິນຢູ່, ຄ່າພັກເຊົາ ໃຫ້ແກ່ທະນາຍຄວາມທີ່ຖືກແຕ່ງຕັ້ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ ເພື່ອຊ່ວຍເຫຼືອບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້.

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ VII
# ຂໍ້ຫ້າມ

### ມາດຕາ 63 ຂໍ້ຫ້າມສຳລັບທະນາຍຄວາມ ຫຼື ວິສາຫະກິດກົດໝາຍ

ຫ້າມທະນາຍຄວາມ ຫຼື ວິສາຫະກິດກົດໝາຍ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໂຄສະນາເກີນຄວາມເປັນຈິງ;
2. ວ່າຄວາມ ໃຫ້ທັງໂຈດ ແລະ ຈຳເລີຍ ໃນຄະດີດຽວກັນ;

3. ວ່າຄວາມ ໃນຄະດີທີ່ຕົນໄດ້ຮັບຜິດຊອບ ໃນເວລາເປັນຜູ້ພິພາກສາ, ພະນັກງານໄອຍະການ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ມາກ່ອນ;

4. ຍົກເລີກສັນຍາບໍລິການທາງດ້ານກົດໝາຍ ແຕ່ຝ່າຍດຽວໂດຍບໍ່ມີເຫດຜົນ;

5. ກຳນົດຄ່າບໍລິການ ບໍ່ຈະແຈ້ງໃນສັນຍາບໍລິການທາງດ້ານກົດໝາຍ;

6. ຮຽກເອົາຄ່າບໍລິການ ນອກເໜືອຈາກທີ່ໄດ້ກຳນົດໄວ້ໃນສັນຍາ;

7. ໃຫ້ຄຳໝັ້ນສັນຍາວ່າຈະຊະນະຄະດີ;

8. ເປີດເຜີຍຄວາມລັບຂອງລູກຄວາມ;

9. ຫາຂໍ້ມູນທີ່ບໍ່ດີຂອງຄູ່ຄວາມຝ່າຍກົງກັນຂ້າມ ຊຶ່ງບໍ່ກ່ຽວຂ້ອງກັບຄະດີທີ່ຮັບວ່າຄວາມມາເປັນເຫດຜົນສູ້ຄະດີ;

10. ໃຊ້ຄຳເວົ້າທີ່ບໍ່ສຸພາບ, ນາບຂູ່, ໃຊ້ຄວາມຮຸນແຮງ, ໝິ່ນປະໝາດຜູ້ອື່ນ ຫຼື ການຈັດຕັ້ງລວມທັງ ຕໍ່ເນື້ອໃນຄຳຖະແຫຼງຂອງຜູ້ອື່ນ, ບິດບັນຍັດຂອງກົດໝາຍ ແຫ່ງ ສປປ ລາວ;

11. ໃຊ້ບັດທະນາຍຄວາມຂອງຕົນ ໃນທາງທີ່ບໍ່ຖືກຕ້ອງ ຫຼື ໃຫ້ຜູ້ອື່ນນຳໃຊ້;

12. ຫຼົບຫຼີກການວ່າຄວາມທີ່ຕົນຮັບຜິດຊອບ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ຈັນຍາບັນທະນາຍຄວາມ.

### ມາດຕາ 64 ຂໍ້ຫ້າມສຳລັບລູກຄວາມ

ຫ້າມລູກຄວາມ ມີ ພຶດຕິກຳ ໃດໜຶ່ງ ດັ່ງນີ້:

1. ປະຕິເສດການຈ່າຍຄ່າບໍລິການໃຫ້ແກ່ທະນາຍຄວາມ ຫຼື ວິສາຫະກິດກົດໝາຍ ຕາມສັນຍາທີ່ໄດ້ເຊັນກັນ;

2. ບັງຄັບ, ຈອບອອຍ ທະນາຍຄວາມ ຫຼື ວິສາຫະກິດກົດໝາຍ ໃຫ້ມີການກະທຳໃດໜຶ່ງທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;

3. ຍົກເລີກສັນຍາບໍລິການທາງດ້ານກົດໝາຍ ແຕ່ຝ່າຍດຽວໂດຍບໍ່ມີເຫດຜົນ;

4. ໃຊ້ຄຳເວົ້າທີ່ບໍ່ສຸພາບ, ນາບຂູ່, ໃຊ້ຄວາມຮຸນແຮງ, ໝິ່ນປະໝາດ ທະນາຍຄວາມ, ວິສາຫະກິດກົດໝາຍ ແລະ ສະພາທະນາຍຄວາມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 65 ຂໍ້ຫ້າມສຳລັບບຸກຄົນ ຫຼື ການຈັດຕັ້ງອື່ນ

ຫ້າມບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກຳ ໃດໜຶ່ງ ດັ່ງນີ້:

1. ປະຕິເສດການໃຫ້ຄວາມຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງ ທະນາຍຄວາມ ຫຼື ວິສາຫະກິດກົດໝາຍ;

2. ຍຸຍົງບໍ່ໃຫ້ຜູ້ອື່ນ ນຳໃຊ້ການບໍລິການທາງດ້ານກົດໝາຍຂອງທະນາຍຄວາມ ຫຼື ວິສາຫະກິດກົດໝາຍ;

3. ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງແກ່ທະນາຍຄວາມ ຫຼື ວິສາຫະກິດກົດໝາຍ;

4. ແອບອ້າງວ່າຕົນເປັນທະນາຍຄວາມ ຫຼື ປອມແປງບັດທະນາຍຄວາມ;

5. ໃຊ້ຄໍາເວົ້າທີ່ບໍ່ສຸພາບ, ນາບຂູ່, ໃຊ້ຄວາມຮຸນແຮງ, ໝິ່ນປະໝາດ ທະນາຍຄວາມ, ວິສາຫະກິດກົດໝາຍ ແລະ ສະພາທະນາຍຄວາມ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາວຽກງານທະນາຍຄວາມ
## ໝວດທີ 1
## ການຄຸ້ມຄອງວຽກງານທະນາຍຄວາມ

### ມາດຕາ 66 (ປັບປຸງ) ອົງການຄຸ້ມຄອງວຽກງານທະນາຍຄວາມ

ລັດຖະບານ ຄຸ້ມຄອງວຽກງານທະນາຍຄວາມ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການຍຸຕິທໍາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທະນາຍຄວາມ ປະກອບດ້ວຍ:

1. ກະຊວງຍຸຕິທໍາ;
2. ພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ;
3. ຫ້ອງການຍຸຕິທໍາ ເມືອງ, ເທດສະບານ, ນະຄອນ.

### ມາດຕາ 67 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທໍາ

ໃນການຄຸ້ມຄອງວຽກງານທະນາຍຄວາມ ກະຊວງຍຸຕິທໍາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບທະນາຍຄວາມ ໂດຍສົມທົບກັບສະພາທະນາຍຄວາມ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍກ່ຽວກັບທະນາຍຄວາມ;

3. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບທະນາຍຄວາມ;

4. ກໍານົດຫຼັກສູດ ສ້າງ ແລະ ຝຶກອົບຮົມວິຊາຊີບທະນາຍຄວາມ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ແຕ່ງຕັ້ງເປັນທະນາຍຄວາມ;

6. ລຶບຊື່ອອກຈາກການເປັນທະນາຍຄວາມ ຕາມການສະເໜີຂອງສະພາທະນາຍຄວາມ;

7. ອະນຸຍາດ ຫຼື ຖອນການອະນຸຍາດ ໃຫ້ທະນາຍຄວາມຕ່າງປະເທດ ເຄື່ອນໄຫວວິຊາຊີບທະນາຍຄວາມ ຢູ່ ສປປ ລາວ;

8. ອະນຸຍາດ ຫຼື ຖອນໃບອະນຸຍາດໃຫ້ເຄື່ອນໄຫວວິສາຫະກິດກົດໝາຍ ແລ້ວແຈ້ງໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ;

9. ຮັບຮອງເອົາຈັນຍາບັນທະນາຍຄວາມ ຕາມການສະເໜີຂອງສະພາທະນາຍຄວາມ;

10. ພິຈາລະນາຮັບຮອງເອົາເຄື່ອງແບບຂອງທະນາຍຄວາມ ຕາມການສະເໜີຂອງສະພາທະນາຍຄວາມ;

11. ຕິດຕາມ, ກວດກາການເຄື່ອນໄຫວວຽກງານຂອງສະພາທະນາຍຄວາມ ແລະ ວິສາຫະກິດກົດໝາຍ;

12. ຕິດຕາມ, ກວດກາ ແລະ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ທະນາຍຄວາມ ກັບ ສະພາທະນາຍຄວາມ;

13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທະນາຍຄວາມ;

14. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງສະພາທະນາຍຄວາມຕໍ່ລັດຖະບານ;

15. ນໍາໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານທະນາຍຄວາມ ພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍກ່ຽວກັບທະນາຍຄວາມ;

2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບທະນາຍຄວາມ;

3. ຕິດຕາມ, ກວດກາການເຄື່ອນໄຫວວຽກງານຂອງ ຫ້ອງການສະພາທະນາຍຄວາມປະຈໍາ ແຂວງ, ນະຄອນຫຼວງ ແລະ ວິສາຫະກິດກົດໝາຍ;

4. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທະນາຍຄວາມຕາມການມອບໝາຍ;

5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານທະນາຍຄວາມທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຕໍ່ກະຊວງຍຸຕິທໍາ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 69 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການຍຸຕິທໍາ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານທະນາຍຄວາມ ຫ້ອງການຍຸຕິທໍາ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍກ່ຽວກັບທະນາຍຄວາມ;

2. ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບທະນາຍຄວາມ;

3. ຕິດຕາມ, ກວດກາການເຄື່ອນໄຫວວຽກງານຂອງທະນາຍຄວາມ;

4. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານທະນາຍຄວາມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຕໍ່ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາວຽກງານທະນາຍຄວາມ

### ມາດຕາ 70 (ໃໝ່) ອົງການກວດກາວຽກງານທະນາຍຄວາມ

ອົງການກວດກາວຽກງານທະນາຍຄວາມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານທະນາຍຄວາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

### ມາດຕາ 71 (ໃໝ່) ເນື້ອໃນການກວດກາ

ການກວດກາວຽກງານທະນາຍຄວາມ ມີເນື້ອໃນ ດັ່ງນີ້:

1. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງອົງການຄຸ້ມຄອງວຽກງານທະນາຍຄວາມ;

2. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທະນາຍຄວາມ;

3. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທະນາຍຄວາມ ແລະ ວິສາຫະກິດກົດໝາຍ;

4. ການໃຫ້ບໍລິການທາງດ້ານກົດໝາຍ ແລະ ການເຄື່ອນໄຫວວິຊາຊີບທະນາຍຄວາມ.

### ມາດຕາ 72 (ໃໝ່) ຮູບການການກວດກາ

ການກວດກາວຽກງານທະນາຍຄວາມ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາ ແບບກະທັນຫັນ.

ການກວດກາ ປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານທະນາຍຄວາມ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ IX
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

### ມາດຕາ 73 (ປັບປຸງ) ວັນສ້າງຕັ້ງສະພາທະນາຍຄວາມ

ວັນສ້າງຕັ້ງສະພາທະນາຍຄວາມ ໃຫ້ຖືເອົາວັນທີ 30 ມີນາ 1989 ຊຶ່ງເປັນວັນປະກາດໃຊ້ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະທະນາຍຄວາມກຳແພງນະຄອນຫຼວງວຽງຈັນ.

### ມາດຕາ 74 (ປັບປຸງ) ງົບປະມານຂອງສະພາທະນາຍຄວາມ

ສະພາທະນາຍຄວາມ ມີງົບປະມານ ທີ່ເປັນເອກະລາດຂອງຕົນເອງ ຊຶ່ງມີແຫຼ່ງລາຍຮັບຈາກ:

1. ຄ່າບຳລຸງການເປັນສະມາຊິກສະພາທະນາຍຄວາມ ລວມທັງທະນາຍຄວາມຕ່າງປະເທດ ທີ່ໄດ້ຂຶ້ນທະບຽນນຳສະພາທະນາຍຄວາມ;
2. ການປະກອບສ່ວນຂອງສະມາຊິກ;
3. ຄ່າຝຶກອົບຮົມ ແລະ ຄ່າບໍລິການຕ່າງໆ ທີ່ຈັດໂດຍສະພາທະນາຍຄວາມ;
4. ການຊ່ວຍເຫຼືອຈາກລັດ ແລະ ການປະກອບສ່ວນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ແຫຼ່ງລາຍຮັບອື່ນໆ.

### ມາດຕາ 75 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ

ງົບປະມານຂອງສະພາທະນາຍຄວາມ ໃຫ້ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ດັ່ງນີ້:

1. ການຄຸ້ມຄອງບໍລິຫານສະພາທະນາຍຄວາມ;
2. ການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານ, ຄະນະປະຈຳ ແລະ ຄະນະກວດກາສະພາທະນາຍຄວາມ;
3. ການຈັດກອງປະຊຸມໃຫຍ່ທະນາຍຄວາມ;
4. ການພັດທະນາວິຊາຊີບທະນາຍຄວາມ;

5. ສະຫວັດດີການສັງຄົມແກ່ສະມາຊິກສະພາທະນາຍຄວາມ ແລະ ນະໂຍບາຍອື່ນ.

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງສະພາທະນາຍຄວາມ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງສະພາທະນາຍຄວາມ.

**ມາດຕາ 76 ເຄື່ອງໝາຍຂອງສະພາທະນາຍຄວາມ**

ເຄື່ອງໝາຍຂອງສະພາທະນາຍຄວາມ ເປັນຮູບວົງມົນ, ໃຈກາງ ມີຮູບຊົງສອງຜາງ, ເບື້ອງເທິງ ຂຽນວ່າ "ສະພາທະນາຍຄວາມ", ເບື້ອງລຸ່ມ ຂຽນເປັນພາສາອັງກິດວ່າ "Lao Bar Association", ສອງ ຟາກຂ້າງ ເປັນກາຮວງເຂົ້າ.

**ມາດຕາ 77 (ໃໝ່) ເຄື່ອງແບບຂອງທະນາຍຄວາມ**

ທະນາຍຄວາມ ມີເຄື່ອງແບບ ໃນການເຄື່ອນໄຫວວິຊາຊີບຂອງຕົນ ຊຶ່ງກະຊວງຍຸຕິທຳເປັນ ຜູ້ຮັບຮອງ.

ໃນການວ່າຄວາມຢູ່ສານປະຊາຊົນ ທະນາຍຄວາມທຸກຄົນ ຕ້ອງນຸ່ງເຄື່ອງແບບຂອງຕົນ.

**ມາດຕາ 78 ຕາປະທັບຂອງສະພາທະນາຍຄວາມ**

ສະພາທະນາຍຄວາມ ມີຕາປະທັບສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 79 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ທະນາຍຄວາມ, ວິສາຫະກິດກົດໝາຍ ຫຼື ສະພາທະນາຍຄວາມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ, ການໃຫ້ບໍລິການທາງດ້ານກົດໝາຍທີ່ບໍ່ເສຍຄ່າ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 80 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ທະນາຍຄວາມ, ວິສາຫະກິດກົດໝາຍ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກສຶກສາອົບຮົມ, ຖອນບັດທະນາຍຄວາມ, ຖອນໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ, ປັບໃໝ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຕາມກໍລະນີເບົາ ຫຼື ໜັກ ແລະ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

# ພາກທີ XI
# ບົດບັນຍັດສຸດທ້າຍ

**ມາດຕາ 81 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 82 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ທະນາຍຄວາມ ສະບັບເລກທີ 010/ສພຊ, ລົງວັນທີ 21 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**